ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 144 /ນຍ

ນະຄອນຫລວງວຽງຈັນ, ວັນທີ 08./05./2017

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 05/ສພຊ, ລົງວັນທີ 20 ເມສາ 2016 ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງລັດຖະບານ;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 3589/ກງ, ລົງວັນທີ 25 ຕຸລາ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 98 /ພນ, ລົງວັນທີ 25 ເມສາ 2017.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງການເງິນ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ ແລະ ພັດທະນາວຽກງານການເງິນ ໃນຂອບເຂດທົ່ວປະເທດ ເພື່ອປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກະຊວງການເງິນ ຂຽນເປັນຕົວອັກສອນຫຍໍ້ວ່າ "ກງ" ແມ່ນກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກກ່ຽວກັບວຽກງານການເງິນ, ງົບປະມານແຫ່ງລັດ ແລະ ຄຸ້ມຄອງຕາມສາຍຕັ້ງ: ພາສີ, ສ່ວຍສາອາກອນ, ຄັງເງິນແຫ່ງຊາດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2

### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ ແລະ ມະຕິ ຂອງລັດຖະບານ;
2. ຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງຂອງລັດຖະບານ ກ່ຽວກັບວຽກງານການເງິນ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;
3. ຄົ້ນຄວ້າສ້າງ, ປັບປຸງ ກົດໝາຍ ແລະ ນິຕິກຳ ຂອງຂະແໜງການເງິນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
4. ຄົ້ນຄວ້າສ້າງ, ປັບປຸງ, ໂຄສະນາເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍການເງິນ, ແຜນງົບປະມານແຫ່ງລັດ ປະຈຳປີ, ໄລຍະກາງ ແລະ ໄລຍະຍາວ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ຕາມຂະແໜງການ ນັບແຕ່ສູນກາງຮອດທ້ອງຖິ່ນຕາມພາລະບົດບາດຂອງຕົນ;
5. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວວຽກງານກ່ຽວກັບ ບັນຊີ ແລະ ກວດສອບອິດສະລະ ລວມທັງເປົ້າໝາຍຖືກກວດສອບ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການບັນຊີ ແລະ ການກວດສອບອິດສະລະຢ່າງເຂັ້ມງວດ;
6. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ໃນຂອບເຂດທົ່ວປະເທດ; ກວດກາບັນດາຫົວໜ່ວຍທຸລະກິດ ພາກລັດ ແລະ ເອກະຊົນ, ຫົວໜ່ວຍງົບປະມານ, ກອງທຶນຂອງລັດ ແລະ ອົງການບໍລິຫານວິຊາການ ໃນການປະຕິບັດພັນທະງົບປະມານ; ເປັນເຈົ້າການປະສານສົມທົບກັບບັນດາການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ໃນການຕິດຕາມ, ກວດກາ ການປະຕິບັດກົດໝາຍ ແລະ ລະບຽບການ ການເງິນ, ປິດບັນຊີງົບປະມານ ແລະ ການເປີດເຜີຍງົບປະມານ ຕາມພາລະບົດບາດຂອງຕົນ;
7. ຄຸ້ມຄອງໜີ້ສິນຂອງລັດໃຫ້ຢູ່ໃນລະດັບທີ່ສະພາແຫ່ງຊາດຮັບຮອງ ແລະ ມີຄວາມປອດໄພ, ຮັບປະກັນໄດ້ສະຖຽນລະພາບຂອງເສດຖະກິດ; ລາຍງານຖານະໜີ້ສິນຕໍ່ລັດຖະບານ ແລະ ສະພາແຫ່ງຊາດ ຕາມກົດໝາຍກຳນົດ;
8. ຄຸ້ມຄອງຄັງສະສົມແຫ່ງລັດ, ຊັບສິນ ແລະ ວັດຖຸມີຄ່າ ຂອງລັດ;
9. ຄົ້ນຄວ້າ, ວິໄຈ ແຜນການລົງທຶນຂອງລັດເຂົ້າໃນວິສາຫະກິດ ແລະ ໂຄງການຕ່າງໆ ໃຫ້ລັດຖະບານຕົກລົງ; ຄຸ້ມຄອງ ແລະ ພັດທະນາວິສາຫະກິດລັດລົງທຶນ, ວຽກງານປະກັນໄພ ແລະ ການບໍລິການ ການເງິນອື່ນໆ ຕາມກົດໝາຍ ແລະ ລະບຽບການ;
10. ຄົ້ນຄວ້າວິທະຍາສາດວຽກງານງົບປະມານ, ການພັດທະນາການເງິນ, ການຄຸ້ມຄອງໜີ້ສິນ ແລະ ການສະສົມ ເພື່ອເປັນພື້ນຖານໃນການຫັນວຽກງານການເງິນໄປສູ່ມາດຕະຖານສາກົນ;
11. ພັດທະນາ ແລະ ຄຸ້ມຄອງ ຕະຫຼາດພັນທະບັດ, ຕະຫຼາດອະສັງຫາລິມະຊັບ ແລະ ຕະຫຼາດອື່ນໆ ຕາມພາລະບົດບາດຂອງຕົນ;
12. ຄົ້ນຄວ້າ, ພັດທະນາ, ຄຸ້ມຄອງ ແລະ ບຳລຸງຮັກສາ ລະບົບເຄືອຂ່າຍ, ຖານຂໍ້ມູນຂ່າວສານເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານການເງິນ-ງົບປະມານແຫ່ງລັດ ໃຫ້ເປັນລະບົບຄົບຊຸດ ແລະ ຫັນໄປສູ່ທັນສະໄໝ;
13. ຄົ້ນຄວ້າວິທະຍາສາດດ້ານເສດຖະກິດ-ການເງິນ ພາຍໃນ, ພາກພື້ນ ແລະ ສາກົນ ເພື່ອລາຍງານຕໍ່ລັດຖະບານແຕ່ລະໄລຍະ;

14. ຄຸ້ມຄອງ, ຈັດຕັ້ງປະຕິບັດ ການຈັດເກັບລາຍຮັບພາສີ ແລະ ສ່ວຍສາອາກອນ, ລາຍຮັບບໍ່ແມ່ນພາສີ ແລະ ສ່ວຍສາອາກອນ, ລາຍຮັບຈາກການຊ່ວຍເຫຼືອລ້າ ແລະ ລາຍຮັບຈາກການປະກອບສ່ວນຂອງສັງຄົມ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ, ລວມສູນໃນລະບົບຄັງເງິນແຫ່ງຊາດ ຕາມກົດໝາຍ ແລະ ລະບຽບການ;
15. ປັບປຸງບູລະນະກົງຈັກການຈັດຕັ້ງຂອງຂະແໜງການເງິນ; ຄຸ້ມຄອງຂຶ້ນແຜນກຳນົດ, ບຳລຸງສ້າງ, ບັນຈຸສັບຊ້ອນ, ປະເມີນຜົນ, ປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ຂະແໜງການເງິນຕາມການແບ່ງຂັ້ນຄຸ້ມຄອງ; ຄຸ້ມຄອງສາຍຕັ້ງດ້ານກົງຈັກການຈັດຕັ້ງ, ບຸກຄະລາກອນ, ດ້ານເຕັກນິກວິຊາການ, ງົບປະມານ, ສະຖານທີ່ເຮັດວຽກ, ພາຫະນະ ແລະ ວັດຖຸອຸປະກອນຕ່າງໆຂອງຂະແໜງພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດຕາມທີ່ກົດໝາຍ ແລະ ລະບຽບການໄດ້ກຳນົດ ແລະ ຫັນກົນໄກການຄຸ້ມຄອງ ໄປສູ່ທັນສະໄໝ;
16. ຄຸ້ມຄອງບໍລິຫານການເງິນ, ຊັບສິນ ແລະ ເອກະສານທາງລັດຖະການ ພ້ອມທັງຂຶ້ນແຜນງົບປະມານ, ສະຫຼຸບ ແລະ ລາຍງານເປັນແຕ່ລະໄລຍະ;
17. ພົວພັນ, ຮ່ວມມື, ປະສານງານ ແລະ ເປັນໃຈກາງແລກປ່ຽນບົດຮຽນ ກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ພາກພື້ນ ກ່ຽວກັບວຽກງານການເງິນ;
18. ຄຸ້ມຄອງ, ຕິດຕາມ, ກວດກາ-ກວດການ ແລະ ປະເມີນຜົນ ການປະຕິບັດລະບຽບ, ກົດໝາຍ, ຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ລວມທັງນິຕິກຳທີ່ລັດຖະບານ ແລະ ກະຊວງການເງິນອາງອອກແຕ່ລະໄລຍະ;
19. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

ມາດຕາ 4 ຂອບເຂດສິດ

1. ສະເໜີລັດຖະບານສ້າງ, ປັບປຸງບັນດາກົດໝາຍ, ນິຕິກຳ ແລະ ມາດຕະການຕ່າງໆ ກ່ຽວກັບວຽກງານຂະແໜງການເງິນ;
2. ອອກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງຂະແໜງການເງິນ ຕາມກົດໝາຍ;
3. ຕົກລົງດັດສະເລ່ຍລາຍຈ່າຍງົບປະມານແຫ່ງລັດຈາກພາກໜຶ່ງໄປໃສ່ພາກອື່ນທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈຳປີ ຂອງຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ;
4. ສັ່ງການໃຫ້ການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ແກ້ໄຂ ຫຼື ຍົກເລີກ ເມື່ອກວດກາເຫັນການເກັບລາຍຮັບ ແລະ ການປະຕິບັດລາຍຈ່າຍ ບໍ່ຖືກຕ້ອງຕາມກົດໝາຍ;
5. ອອກອະນຸຍາດເປີດ, ສັ່ງໂຈະ ຫຼື ລຶບລ້າງບັນຊີເງິນຝາກຂອງຫົວໜ່ວຍງົບປະມານຂັ້ນຕ່າງໆທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
6. ສັ່ງໂຈະ ຫຼື ຍົກເລີກ ການຕົກລົງກ່ຽວກັບງົບປະມານ, ການຈັດຊື້-ຈັດຈ້າງ ດ້ວຍງົບປະມານຂອງລັດຂອງການຈັດຕັ້ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
7. ອອກຄຳສັ່ງຮິບ, ອາຍັດ, ສືບສວນ, ສອບສວນ ແລະ ດຳເນີນມາດຕະການ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການຂອງຂະແໜງການເງິນ;
8. ສັ່ງມອບທຸກແຫຼ່ງລາຍຮັບ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດ; ອອກຄຳສັ່ງຈ່າຍເງິນງົບປະມານປະຈຳປີຕາມແຜນສະພາແຫ່ງຊາດຮັບຮອງ ແລະ ສັ່ງເຄື່ອນຍ້າຍເງິນໃນລະບົບຄັງເງິນແຫ່ງຊາດ;
9. ຕົກລົງສ້າງຕັ້ງ ຫຼື ຍຸບເລີກ ຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ ທີ່ຂຶ້ນກັບຫົວໜ່ວຍງົບປະມານຂັ້ນໜຶ່ງຂອງບັນດາອົງການຈັດຕັ້ງລັດຂັ້ນສູນກາງ ແລະ ທ້ອງຖິ່ນ;

10. ອອກອະນຸຍາດການສ້າງຕັ້ງປະເພດສາງຂອງພາສີ, ຮ້ານຄ້າປອດພາສີ, ເຂດບໍລິການຂົນສົ່ງ ແລະ ການດຳເນີນທຸລະກິດປະກັນໄພ;
11. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ, ປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງການເງິນ ລວມທັງສາມຂະແໜງສາຍຕັ້ງ: ພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ທີ່ປະຈຳຢູ່ທ້ອງຖິ່ນ;
12. ແຕ່ງຕັ້ງ, ສັບປ່ຽນຕຳແໜ່ງ ຄະນະສະພາບໍລິຫານ, ປົດຕຳແໜ່ງຄະນະອຳນວຍການວິສາຫະກິດລັດລົງທຶນທີ່ລັດຖະບານມີສິດແຕ່ງຕັ້ງ ຕາມກຳນົດວາລະ ຫຼື ກ່ອນວາລະ ອີງຕາມສະພາບການດຳເນີນທຸລະກິດ ຫຼື ຕາມການປະຕິບັດໜ້າທີ່ ຫຼື ຄວາມຮຽກຮ້ອງຕ້ອງການອື່ນໆ ຂອງການຈັດຕັ້ງ;
13. ກວດກາ-ກວດການ ບັນດາຂະແໜງການເງິນຂັ້ນສູນກາງ, ທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ ກ່ຽວກັບການປະຕິບັດກົດໝາຍ ແລະ ລະບຽບການ ທາງດ້ານການເງິນ;
14. ຄຸ້ມຄອງ ແລະ ນຳໃຊ້ ຊັບສິນ, ວັດຖຸອຸປະກອນຕ່າງໆ ແລະ ງົບປະມານປະຈຳປີຂອງກະຊວງການເງິນ ທີ່ສະພາແຫ່ງຊາດຮັບຮອງ;
15. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກຂອງກະຊວງການເງິນ ປະກອບດ້ວຍ:

1. ຫ້ອງການກະຊວງ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມບັນຊີ;
5. ກົມງົບປະມານແຫ່ງລັດ;
6. ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ;
7. ກົມຄຸ້ມຄອງຊັບສິນຂອງລັດ;
8. ກົມຄຸ້ມຄອງ, ພັດທະນາລັດວິສາຫະກິດ ແລະ ການປະກັນໄພ;
9. ກົມນະໂຍບາຍການເງິນ ແລະ ນິຕິກຳ;
10. ກົມສະສົມແຫ່ງລັດ;
11. ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ;
12. ສະຖາບັນເສດຖະກິດ-ການເງິນ;

ກົງຈັກຄຸ້ມຄອງຕາມສາຍຕັ້ງຢູ່ຂັ້ນສູນກາງ:

1. ກົມພາສີ;
2. ກົມສ່ວຍສາອາກອນ;
3. ຄັງເງິນແຫ່ງຊາດ.

**ຫົວໜ່ວຍວິຊາການລະດັບສອງຂຶ້ນກັບກະຊວງປະກອບມີ:**

1. ວິທະຍາໄລການເງິນພາກເໜືອ;
2. ວິທະຍາໄລການເງິນພາກໃຕ້.

**ກົງຈັກຄຸ້ມຄອງຕາມສາຍຕັ້ງປະຈໍາຢູ່ທ້ອງຖິ່ນ:**

1. ກອງຄຸ້ມຄອງພາສີ;
   - ຫ້ອງວິຊາການຈໍານວນໜຶ່ງຂຶ້ນກັບ;
   - ດ່ານພາສີຊາຍແດນ: ດ່ານພາສີສາກົນ, ດ່ານພາສີທ້ອງຖິ່ນ, ດ່ານພາສີປະເພນີ.
2. ສ່ວຍສາອາກອນປະຈໍາແຂວງ, ນະຄອນຫຼວງ
   - ສ່ວຍສາອາກອນປະຈໍາເມືອງ, ເທດສະບານ, ນະຄອນ.
3. ຄັງເງິນແຫ່ງຊາດປະຈໍາແຂວງ, ນະຄອນຫຼວງ
   - ຄັງເງິນແຫ່ງຊາດປະຈໍາເມືອງ, ເທດສະບານ, ນະຄອນ.

**ກົງຈັກການຈັດຕັ້ງຂອງທ້ອງຖິ່ນ ຢູ່ພາຍໃຕ້ການຊີ້ນໍາດ້ານວິຊາການ ຂອງກະຊວງການເງິນ ມີຄື:**

1. ຂັ້ນແຂວງ ມີ ພະແນກການເງິນ;
2. ຂັ້ນເມືອງ ມີ ຫ້ອງການການເງິນ.

ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນຂອງກະຊວງການເງິນ ປະກອບມີ:

ກ. **ຂັ້ນກະຊວງ**

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນໍາຂົງເຂດວຽກງານ ໃນການຄຸ້ມຄອງມະຫາພາກຕາມຂະແໜງການຕົນ ຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ;

   ໃນເວລາຕິດຂັດ ລັດຖະມົນຕີກະຊວງ ຕ້ອງມອບສິດໃຫ້ຮອງລັດຖະມົນຕີກະຊວງ ທ່ານໃດໜຶ່ງເປັນຜູ້ຮັກສາການແທນ.
2. ຮອງລັດຖະມົນຕີກະຊວງຈໍານວນໜຶ່ງ ຊ່ວຍລັດຖະມົນຕີກະຊວງ ໃນການຊີ້ນໍາວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີກະຊວງ;

   ຮອງລັດຖະມົນຕີກະຊວງເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີກະຊວງຕິດຂັດ.
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນ ວິຊາການຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ.

ຂ. **ພະແນກການເງິນ ຂັ້ນແຂວງ ແລະ ຫ້ອງການການເງິນ ຂັ້ນເມືອງ**

1. ຂັ້ນແຂວງ ມີຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການ ຕາມການກໍານົດຕໍາແໜ່ງງານ;
2. ຂັ້ນເມືອງ ມີຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການ ຕາມການກໍານົດຕໍາແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້.

## ໝວດທີ 4
### ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກະຊວງການເງິນ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວຂອງກະຊວງການເງິນ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ ແລະ ຫຼັກການລວມຂອງລັດຖະບານ; ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນແນໃສ່ໝູນໃຊ້ກຳລັງແຮງງານຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຂະແໜງການເງິນ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍພ້ອມທັງປະຕິບັດການລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີ ເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງກັບລະບຽບຫຼັກການ.

## ໝວດທີ 5
### ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ, ຕາປະທັບ, ເຄື່ອງແບບ ແລະ ກາໝາຍ**

ກະຊວງການເງິນ ມີງົບປະມານ, ຕາປະທັບຂອງຕົນ ເພື່ອຮັບໃຊ້ເຄື່ອນໄຫວວຽກງານທາງລັດຖະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ;

ກະຊວງການເງິນ ມີກາໝາຍສະເພາະຂອງຕົນ, ພະນັກງານ-ລັດຖະກອນ ໃນຂະແໜງການເງິນ ແມ່ນມີເຄື່ອງແບບ ແລະ ກາໝາຍ ຕາມແຕ່ລະກຸ່ມວຽກ ໃນເວລາປະຕິບັດໜ້າທີ່ທາງລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີກະຊວງການເງິນ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ວິທະຍາໄລ ແລະ ກົງຈັກຢູ່ທ້ອງຖິ່ນທີ່ກຳນົດໃນມາດຕາ 5 ຂອງດຳລັດສະບັບນີ້ ໃຫ້ລະອຽດຈະແຈ້ງ, ຮັດກຸມ ແລະ ເໝາະສົມເພື່ອຮັບໃຊ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

ມາດຕາ 11 ການຈັດຕັ້ງປະຕິບັດ

ກະຊວງການເງິນ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 12 ຜົນສັກສິດ

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດໍາລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ